ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

*****************

ກະຊວງອຸດສາຫະກຳ ແລະ ການຄ້າ ເລກທີ 2229 /ອຄ.ຄພນ

ນະຄອນຫລວງວຽງຈັນ, ວັນທີ 10/11/2009

# <u>ແຈ້ງການ</u>

**<u>ເຖິງ</u> : - ບັນດາ ອົງການຈັດຕັ້ງ ທັງພາກລັດ ແລະ ເອກະຊົນ.**

**- ບັນດາ ຜູ້ປະກອບການທຸລະກິດ ແລະ ຫົວໜ່ວຍທຸລະກິດ ທີ່ເຄື່ອນໄຫວ ດຳເນີນທຸລະກິດ ຢູ່ ສປປ ລາວ.**

**<u>ເລື່ອງ</u> :** ແຈ້ງການເພີ້ມເຕີມກ່ຽວກັບການແຈ້ງຂຶ້ນແລະດັດແກ້ທະບຽນວິສາຫະກິດ ຕາມກົດໝາຍວ່າດ້ວຍ ວິສາຫະກິດ.

ເພື່ອເພີ້ມທະວີໃນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍວິສາຫະກິດ, ສະບັບເລກທີ 11/ສພຊ, ລົງວັນທີ 9 /11/ 2005 ໃຫ້ປະກົດຜົນນເປັນຈິງ ແລະ ສືບຕໍ່ຈັດຕັ້ງປະຕິບັດຕາມແຈ້ງການເລກທີ 1238 / ອຄ.ຄພນ, ລົງວັນທີ 28/07/2008 ກ່ຽວກັບການປະກາດເປີດ ຮັບການແຈ້ງຂຶ້ນ ແລະ ດັດແກ້ທະບຽນວິສາຫະກິດຕາມກົດໝາຍວ່າດ້ວຍວິສາຫະກິດ, ຊຶ່ງໃນໄລຍະຜ່ານມາ ເຫັນວ່າບັນດາຜູ້ປະກອບການທຸລະກິດແລະ ຫົວໜ່ວຍວິສາຫະກິດສ່ວນຫຼາຍຍັງບໍ່ທັນໄດ້ມາແຈ້ງຂຶ້ນ ແລະ ດັດແກ້ທະບຽນວິສາຫະກິດຕາມລະບຽບການທີ່ກຳນົດໄວ້ຕໍ່ບັນຫາດັ່ງກ່າວແມ່ນເຮັດໃຫ້ຂະແໜງອຸດສາຫະກຳ ແລະ ການຄ້າບໍ່ສາມາດສົ່ງເສີມ, ຄຸ້ມຄອງ,ຕິດຕາມ, ກວດກາ, ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ແລະ ເກັບກຳສັງລວມຂໍ້ມູນ ເຂົ້າສູ່ລະບົບຖານຂໍ້ມູນແຫ່ງຊາດ(National Database)ກ່ຽວກັບຫົວໜ່ວຍວິສາຫະກິດຢູ່ໃນຂອບເຂດທົ່ວປະເທດໄດ້ດີເທົ່າທີ່ຄວນ.

**ລັດຖະມົນຕີວ່າການ ກະຊວງອຸດສາຫະກຳແລະການຄ້າ ຖືເປັນກຽດແຈ້ງມາຍັງທ່ານ ດັ່ງນີ້:**

1. ບັນດາຫົວໜ່ວຍວິສາຫະກິດ ທີ່ໄດ້ຂຶ້ນທະບຽນວິສາຫະກິດຕາມກົດໝາຍວ່າດ້ວຍທຸລະກິດທີ່ຂັ້ນກະຊວງ, ຂັ້ນພະແນກ ແລະ ຫ້ອງການອຸດສາຫະກຳ-ການຄ້າຂັ້ນເມືອງ ໃນຂອບເຂດທົ່ວປະເທດ ອອກໃຫ້ໃນເມື່ອກ່ອນໃຫ້ຮີບຮ້ອນ ມາແຈ້ງຂຶ້ນ ເພື່ອປັບປຸງໂຄງປະກອບຂອງວິສາຫະກິດຄືນໃໝ່ ໃຫ້ສອດຄ່ອງຕາມປະເພດ, ຮູບການ, ຮູບແບບຂອງວິສາຫະກິດ, ດັດແກ້, ປ່ຽນແປງໃບທະບຽນວິສາຫະກິດ ຄືນໃໝ່ໃຫ້ສອດຄ່ອງຕາມກົດໝາຍວ່າດ້ວຍວິສາຫະກິດ, ສ່ວນແບບຟອມຄຳຮ້ອງໃຫ້ພົວພັນເອົານຳບັນດາຫ້ອງການເຈົ້າໜ້າທີ່ທະບຽນວິສາຫະກິດ ໃນຂອບເຂດທົ່ວປະເທດ.

ສຳລັບບຸກຄົນຫຼືນິຕິບຸກຄົນຫລືຫົວໜ່ວຍທຸລະກິດໃດທີ່ມີການເຄື່ອນໄຫວດຳເນີນທຸລະກິດຢູ່ສປປລາວ ຖ້າບໍ່ມາແຈ້ງຂຶ້ນ ແລະ ດັດແກ້ທະບຽນວິສາຫະກິດ ແລະ ຍັງສືບຕໍ່ເຄື່ອນໄຫວດຳເນີນທຸລະກິດຖືວ່າເປັນການເຄື່ອນໄຫວດຳເນີນທຸລະກິດທີ່ຝ່າຝືນ,ຄັດກັບລະບຽບກົດໝາຍ,ໃນໄລຍະ 01ປີຜ່ານມາກໍ່ໄດ້ແຈ້ງແນະນຳຕັກເຕືອນຮັບຊາບທົ່ວເຖິງກັນແລ້ວ, ແຕ່ຖ້າຫາກຍັງບໍ່ປະຕິບັດເລີ້ມແຕ່ ເດືອນ**ມີນາ** **(3) 2010** ເປັນຕົ້ນໄປຈະ

ໄດ້ເລີ່ມຈັດຕັ້ງປະຕິບັດມາດຕະການທາງດ້ານເສດຖະກິດແລະປັບໃໝເປັນແຕ່ລະກໍລະນີນັບແຕ່1.000.000 **ກີບ ຫາ** 10.000.000 **ກີບ** ຕາມທີ່ກໍານົດໄວ້ໃນ **ມາດຕາ** 236 ຂອງກົດໝາຍວ່າດ້ວຍວິສາຫະກິດ.

2. ບຸກຄົນ ຫຼື ນິຕິບຸກຄົນໃດໄດ້ຂຶ້ນທະບຽນວິສາຫະກິດຕາມກົດໝາຍວ່າດ້ວຍວິສາຫະກິດ ແລ້ວຕ້ອງຂຶ້ນທະບຽນອາກອນນໍາຂະແໜງການເງິນຕາມລະບຽບການ ແລະ ຂຶ້ນປ້າຍວິສາຫະກິດໃຫ້ສໍາເລັດພາຍໃນ**ກໍານົດ 20 ວັນ**, ຊຶ່ງເນື້ອໃນຂອງ ປ້າຍໃຫ້ຖືກຕ້ອງຕາມໃບທະບຽນວິສາຫະກິດເຊັ່ນ: ຊື່ວິສາຫະກິດ, ເລກລໍາດັບຜູ້ຖືທະບຽນ, ເລກທີໃບທະບຽນ, ທີ່ຕັ້ງຂອງວິສາຫະກິດ ແລະ ເບີໂທລະສັບ, ແຟກ ຫຼື ອີແມລ(ຖ້າມີ). ສໍາລັບສີຂອງປ້າຍວິສາຫະກິດເອກະຊົນ ຕ້ອງເປັນພື້ນສີເຫຼືອງ ແລະ ຕົວໜັງສືສີແດງ, ວິສາຫະກິດຂອງລັດທີ່ສ້າງຕັ້ງເປັນ ບໍລິສັດລັດ ແລະ ບໍລິສັດປະສົມຕ້ອງເປັນພື້ນສີຂາວຕົວໜັງສື ສີແດງ, ສ່ວນຂະໜາດຂອງປ້າຍຕ້ອງມີຂະໜາດທີ່ເໝາະສົມ ແລະ ຕິດໄວ້ດ້ານໜ້າສໍານັກງານຂອງວິສາຫະກິດ ເພື່ອໃຫ້ສາທາລະນະຊົນຮັບຊາບ ແລະ ເພື່ອເປັນເງື່ອນໄຂສະດວກໃຫ້ແກ່ການຕິດຕາມ, ສົ່ງເສີມ, ກວດກາ ຂອງບັນດາເຈົ້າໜ້າທີ່ໆກ່ຽວຂ້ອງ ຖ້າຫົວໜ່ວຍວິສາຫະກິດໃດບໍ່ປະຕິບັດ ຫຼື ຂຶ້ນປ້າຍ ແລະ ໃຊ້ຊື່ວິສາຫະກິດບໍ່ຖືກຕ້ອງ ຕາມໃບທະບຽນວິສາຫະກິດຕົນຈະຖືກແນະນໍາຕັກເຕືອນ ຫຼື ປັບໃໝ **200.000 ກີບ/ຄັ້ງ** ຕາມທີ່ໄດ້ກໍານົດໄວ້ໃນ **ມາດຕາ 240** ຂອງກົດໝາຍວ່າດ້ວຍວິສາຫະກິດ.

3. ຫົວໜ່ວຍວິສາຫະກິດໃດໃສ່ຊື່ວິສາຫະກິດທີ່ເກືອດຫ້າມ ແລະ ບໍ່ປົດປ້າຍຊື່ວິສາຫະກິດພາຍຫຼັງທີ່ວິສາຫະກິດຖືກຍຸບເລີກແລ້ວຈະຖືກແນະນໍາຕັກເຕືອນ ຫຼື ປັບໃໝແຕ່ **300.000 ກີບ ຫາ 500.000 ກີບ** ພ້ອມທັງໃຫ້ຢຸດເຊົາການໃສ່ຊື່ວິສາຫະກິດນັ້ນ ແລະ ໃຫ້ປົດປ້າຍອອກຕາມທີ່ໄດ້ກໍານົດໄວ້ໃນ **ມາດຕາ 241 ແລະ 242** ຂອງກົດໝາຍວ່າດ້ວຍວິສາຫະກິດ.

4. ການຈັດຕັ້ງປະຕິບັດວຽກງານດັ່ງກ່າວໃຫ້ປະຕິບັດດັ່ງນີ້:

- ມອບໃຫ້ກົມການຄ້າພາຍໃນຊີ້ນໍາ, ກວດກາແລະ ປະສານສົມທົບກັບພະແນກອຸດສາຫະກໍາ ແລະ ການຄ້າແຂວງ,ນະຄອນຫລວງ ແລະ ຫ້ອງການອຸດສາຫະກໍາແລະການຄ້າເມືອງ ໃນຂອບເຂດທົ່ວປະເທດ;
- ພະແນກອຸດສາຫະກໍາແລະການຄ້າ ແຂວງ, ນະຄອນຫຼວງ ຊີ້ນໍາກວດກາການຈັດຕັ້ງປະຕິບັດຂອງຫ້ອງການເຈົ້າໜ້າທີ່ກວດກາການຄ້າ, ຫ້ອງການເຈົ້າໜ້າທີ່ທະບຽນວິສາຫະກິດ ແລະ ຫ້ອງການອຸດສາຫະກໍາ ແລະ ການຄ້າ ຂັ້ນເມືອງ ໃນຂອບເຂດທົ່ວປະເທດ ເພື່ອຈັດຕັ້ງປະຕິບັດຢ່າງເຂັ້ມງວດ.
- ຂະແໜງການ ແລະ ທຸກພາກສ່ວນ ທີ່ກ່ຽວຂ້ອງ ຈົ່ງໃຫ້ຄວາມຮ່ວມມືໃນການຈັດຕັ້ງປະຕິບັດຕາມລະບຽບກົດໝາຍກໍານົດໄວ້.

5. ແຈ້ງການສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ລັດຖະມົນຕີຊ່ວຍວ່າ**

**ການກະຊວງອຸດສາຫະກໍາ ແລະ ການຄ້າ**

ບ່ອນນໍາສົ່ງ :

- ຫ້ອງວ່າການສູນກາງພັກ "ເພື່ອລາຍງານ"
- ຄະນະເລຂາທິການລັດຖະບານ "ເພື່ອລາຍງານ"
- ບັນດາກະຊວງກ່ຽວຂ້ອງ "ເພື່ອຊາບ"
- ບັນດາກົມອ້ອມຂ້າງກະຊວງ "ເພື່ອຊາບ"
- ພະແນກ ອຄ ແຂວງ ,ນະຄອນຫຼວງ,ບັນດາຫ້ອງການ ອຄ ເມືອງ ໃນຂອບເຂດທົ່ວປະເທດ"ເພື່ອຈັດຕັ້ງປະຕິບັດ"
- ສະມາຄົມ, ກຸ່ມທຸລະກິດ "ເພື່ອໃຫ້ຄວາມຮ່ວມມື"
- ສໍາເນົາ.

ສຽວສະຫວາດ ສະແຫວງສຶກສາ